# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 24 2008 (08-24-2008)

## ຊີວິດທີ່ມີຄວາມໝັ້ນໃຈ

**ຂໍ້ພຣະຄັມພີໃນບົດຮຽນ:** ເຮັບເຣີ 10:19-29, 32-36

**ຄຳຖາມຊີວິດ:** ເຮັດແນວໃດຂ້າພະເຈົ້າຈຶ່ງມີຄວາມໝັ້ນໃຈໃນຊີວິດຄຣິສະຕຽນ?

**ພຣະຄັມພີແຫ່ງຄວາມຈິງ:** ຄຣິສະຕຽນເຮົາສາມາດເປັນພະຍານ ແລະນະມັສການດ້ວຍຄວາມໝັ້ນໃຈ ເພາະການຖວາຍຂອງອົງພຣະເຢຊູເພື່ອເຮົາ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ວຍໃຫ້ທ່ານຄົ້ນຫາຫົນທາງດີທີ່ສຸດຈາກພຣະເຈົ້າໃນຊີວິດປະຈຳວັນຂອງທ່ານໂດຍ:

- ໃຫ້ເຂົ້າໃຈເຖິງຄວາມໝັ້ນໃຈວ່າທ່ານສາມາດນະມັສການແລະເປັນພະຍານໄດ້
- ໃຫ້ຝຶກຫັດຄວາມໝັ້ນໃຈໃນເວລາທ່ານນະມັສການແລະເປັນພະຍານ.

## ບົດນຳ

ນາງງາມໄດ້ປະສົບກັບຄວາມສຳເຣັດໃນເມື່ອໄດ້ເດີນຜ່ານເວທີ, ທະຫານໄດ້ຍ່າງເດີນສວນສນາມ, ນັກກີລາ ໃນເມື່ອໄດ້ເອົາບານເຂົ້າໂກນ. ເຣື່ອງທີ່ກ່າວມານັ້ນແມ່ນເວົ້າເຖິງຫຍັງ? ແມ່ນເຣື່ອງຄວາມໝັ້ນໃຈ.

ບົດຮຽນອາທິດນີ້ໄດ້ສອນໃຫ້ຄຣິສະຕຽນຮູ້ເຖິງເຫດຜົນທີ່ພວກເຮົາມີຄວາມໝັ້ນໃຈໃນພຣະເຈົ້າ. ພວກເຮົາຍັງຖືກທ້າທາຍໃນມີຊີວິດຢູ່ກັບຄວາມໝັ້ນໃຈຕລອດໄປ.

## ສຶກສາພຣະຄັມພີ

### 1. ຮູ້ແຫລ່ງທີ່ມາຂອງຄວາມໝັ້ນໃຈ: (ເຮັບເຣີ 10:19-23)

ຄຳເວົ້າທີ່ສຳຄັນໃນພຣະຄັມພີຕອນນີ້ແມ່ນ **ຄວາມກ້າຫານ**. ພວກຢິວມີຄວາມຢ້ານກົວທີ່ຈະເຂົ້າໄປໃນພຣະພັກຂອງພຣະເຈົ້າ. ພວກມະຫາປະໂຣຫິດເຂົ້າໄປຫາພຣະເຈົ້າຄົນດຽວໃນບ່ອນສັກສິດ, ປີລະເທື່ອ. ກົງກັນກັນຂ້າມ**ຄຣິສະຕຽນຕ້ອງມີຄວາມກ້າຫານເຂົ້າໄປຫາພຣະເຈົ້າ**. ສິ່ງນີ້ເຮັດໃຫ້ເຂົ້າໄປຫາພຣະເຈົ້າໄດ້ຜ່ານທາງ**ພຣະໂລຫິດຂອງອົງພຣະເຢຊູ**. ໃນເມື່ອພຣະເຢຊູໄດ້ສິ້ນພຣະຊົນເທິງໄມ້ກາງແຂນ ພຣະອົງໄດ້ເປີດຫົນທາງໃໝ່ໃຫ້ພວກເຮົາເຂົ້າໄປຫາພຣະເຈົ້າໄດ້.

ທາງໃໝ່ນີ້ໄດ້ຖືກ**ເປີດຂຶ້ນເພື່ອພວກເຮົາໂດຍຜ່ານຜ້າກັ້ງ (ຄືຮ່າງກາຍ)**. ນີ້ໝາຍເຖິງຜ້າກັ້ງໃນພຣະວິຫານໄດ້ຈີກແລ່ງຈາກເທິງລົງລຸ່ມ ໃນເມື່ອພຣະເຢຊູໄດ້ສິ້ນພຣະຊົນ (ມທ. 27:51). ນັ້ນເປັນຄວາມຈິງທີ່ອົງພຣະເຢຊູໄດ້ຖວາຍເພື່ອຈະໄດ້ທຳລາຍກຳແພງລະຫວ່າງພຣະເຈົ້າກັບມະນຸດ. ໃນພຣະຄັມພີເດີມ ປະຊາຊົນຂອງພຣະເຈົ້າຕ້ອງການປະໂຣຫິດນຳເອົາເຄື່ອງຖວາຍບູຊາເຂົ້າໄປໃນພຣະວິຫານເພື່ອຈະຖວາຍບູຊາເພື່ອຄວາມບາບຂອງມະນຸດຊາດ. ແຕ່ບັດນີ້ **ພວກເຮົາມີພຣະມະຫາປະໂຣຫິດອົງໃຫຍ່ໃນພຣະວິຫານຂອງພຣະເຈົ້າ**. ພຣະເຢຊູໄດ້ຖວາຍຕົນເອງເປັນເຄື່ອງຖວາຍອັນອັມມະຕະເພື່ອຄົນຂອງພຣະອົງ.

ຕາມຄວາມຈິງເຫລົ່ານີ້, ຜູ້ຂຽນໄດ້ໃຊ້ຖ້ອຍຄຳ **ໃຫ້ພວກເຮົາ** ເພື່ອໜູນໃຈຜູ້ອ່ານໃຫ້ປະຕິບັດສາມຢ່າງ. (ພວກເຮົາຈະໄດ້ເວົ້າເຖິງສອງຢ່າງໃນຕອນນີ້ ແລະຈະເກັບມາເວົ້າອີກໃນບົດຕໍ່ໄປ).

ນຶ່ງ, ຜູ້ຂຽນໄດ້ກ່າວວ່າ, ໃຫ້ພວກເຮົາເຂົ້າຫາພຣະເຈົ້າດ້ວຍຈິດໃຈ ໃນຄວາມເຊື່ອອັນແນ່ນອນ. ຢາໂກໂບ 4:8 ເວົ້າວ່າ, "ເຈົ້າທັງຫລາຍຈົ່ງເຂົ້າໃກ້ພຣະເຈົ້າ ແລະພຣະອົງຈະສະເດັດມາໃກ້ພວກເຈົ້າ." ຜູ້ຂຽນປຶ້ມເຮັບເຣີໄດ້ເວົ້າເຖິງສອງວິທີທີ່ຈະເຂົ້າໃກ້ພຣະເຈົ້າ, ໂດຍໃຊ້ຕົວຢ່າງຂອງການຖວາຍທີ່ຊາວຢິວໃຊ້ເລືອດ ແລະການຊຳຣະລ້າງ. ສິ່ງນຶ່ງ

> ***ຄວາມກ້າຫານ/ຄວາມໝັ້ນໃຈ***
>
> ໃນພຣະຄັມພີເດີມ ມີແຕ່ພວກມະຫາປະໂຣຫິດໄດ້ເຂົ້າໄປໃນບ່ອນສັກສິດໃນພຣະວິຫານ (ຕໍ່ມາກໍແມ່ນວິຫານໃນກຸງເຢຣູຊາເລັມ). ໃນບ່ອນນັ້ນເປັນບ່ອນສັກສິດທີ່ສຸດທີ່ກ່ຽວກັບການຊົງສະຖິດຢູ່ຂອງພຣະເຈົ້າ ແລະເປັນບ່ອນແຍກອອກຕ່າງຫາກໂດຍມີຜ້າກັ້ງຂັ້ນໄວ້. ໃນບອກສັກສິດນັ້ນມີຫີບພຣະສັນຍາ. ຍ້ອນການຕາຍຂອງອົງພຣະເຢຊູທີ່ໄມ້ກາງແຂນ ຜູ້ທີ່ເຊື່ອທຸກຄົນສາມາດເຂົ້າໄປໃນພຣະພັກຂອງພຣະເຈົ້າໄດ້ຢ່າງກ້າຫານ ແລະດ້ວຍຄວາມໝັ້ນໃຈ, ເພາະພວກເຂົາຮູ້ຈັກວ່າພຣະເຈົ້າໄດ້ອະພັຍຄວາມຜິດບາບ ແລະຕ້ອນຮັບເອົາພວກເຂົາ. ຍິ່ງໄປກວ່ານັ້ນ ຜູ້ທີ່ເຊື່ອບໍ່ຄວນມີຄວາມຢ້ານກົວຕໍ່ຄວາມລັງກຽດຂອງໂລກ. ຜູ້ທີ່ເຊື່ອມີສິ່ງປະເສີດກວ່າສິ່ງຂອງທີ່ຢູ່ໃນໂລກນີ້- "ມີລາງວັນອັນໃຫຍ່" (ເຮັບເຣີ 10:35)

ທີ່ຈະຢູ່ໃກ້ພຣະເຈົ້າແມ່ນທາງພາຍໃນຈິດໃຈ, **ໂດຍຈິດໃຈພາຍໃນໄດ້ຖືກຊຳຣະລ້າງຈາກຄວາມຄິດຊົ່ວຊ້າຕ່າງໆ.** ອີກສິ່ງອື່ນແມ່ນການຊຳຣະລ້າງທາງນອກ **ລ້າງດ້ວຍນ້ຳສະອາດ.** ພວກເຮົາໄດ້ເຂົ້າໄປຫາພຣະເຈົ້າໂດຍທາງໃນຈິດໃຈຮັບເອົາອົງພຣະເຢຊູ ແລະໂດຍທາງນອກຄືການສະແດງອອກດ້ວຍຄວາມເຊື່ອ ຍອມຮັບສິນບັບຕິສະມາ.

ສອງ, ຜູ້ຂຽນໄດ້ກ່າວ **ໃຫ້ພວກເຮົາຍຶດໝັ້ນກັບການສາລະພາບໃນຄວາມຫວັງໂດຍທີ່ບໍ່ຫວັ່ນໄຫວ.** ຜູ້ທີ່ເຊື່ອຕ້ອງໝັ້ນໃຈໃນຄວາມຫວັງກັບຊີວິດອັນຕລອດໄປເປັນນິດຂອງຕົນເອງ, **ເພາະພຣະອົງຜູ້ຊົງສັນຍາເປັນອົງສັດຊື່.**

## ๒. <u>ໃຫ້ຢູ່ໃນຄຣິສຕະຈັກ</u>: (ເຮັບເຣີ 10:24-25)

ອີກເທື່ອນຶ່ງຜູ້ຂຽນໄດ້ໃຊ້ຄຳເວົ້າ **ໃຫ້ພວກເຮົາ,** ຮ້ອງຂໍໃຫ້ຜູ້ອ່ານປະຕິບັດຕົນເພື່ອສະແດງໃຫ້ເຫັນຄວາມໝັ້ນໃຈໃນພຣະເຈົ້າ. ພວກເຂົາຄວນເປັນຄົນເອົາໃຈໃສ່ໃນການເຂົ້າຮ່ວມໃນຄຣິສຕະຈັກ, **ບໍ່ໃຫ້ແຍກໜີອອກໄປຈາກບ່ອນຊຸມນຸມ.** ຄຳເວົ້າທີ່ແປວ່າ "ອອກໄປຈາກ" ມີຄວາມໝາຍວ່າ "ປະລະ, ໜີໄປ." ເປັນຄຳເວົ້າອັນດຽວໃນເມື່ອອົງພຣເຢຊູໃຊ້ຮ້ອງສຽງດັງເວລາຖືກຄຶງທີ່ໄມ້ກາງແຂນໃນເມື່ອພຣະອົງຮູ້ສຶກວ່າໄດ້ຖືກປະຖິ້ມຈາກພຣະບິດາ. (ມັດທາຍ. ๒7:46)

ຜູ້ຂຽນຍັງບອກ**ໃຫ້ເປັນຫ່ວງເປັນໃຍຕໍ່ກັນແລະກັນ.** ຄຣິສະຕຽນຄວນໜູນໃຈກັນໃຫ້ນະມັສການຮ່ວມກັນ. ເໝືອນດັ່ງມີຄຳຂຽນວ່າ, "ເຫລັກລັບເຫລັກໄດ້"(ສຸພາສິດ ๒7:17). ດັ່ງນັ້ນ, ຄຣິສະຕຽນຄວນສຸມໄຟໃສ່ຈິດໃຈຂອງກັນແລະກັນໃຫ້ເອົາໃຈໃສ່.

ຄຳສອນໃນຕອນນີ້ແມ່ນເວົ້າເຖິງຄວາມຮັກ, ບໍ່ແມ່ນເຮັດໃຫ້ມີຄວາມຮູ້ສຶກຜິດ. ມັນແມ່ນການປະກາດເຖິງຄວາມຮັກແລະການເຮັດດີ. ຄຳສອນຕອນນີ້ບໍ່ໄດ້ເວົ້າຂຶ້ນມາເພື່ອໃຫ້ຄົນທີ່ບໍ່ເອົາໃຈໃສ່ໄປນະມັສການຮູ້ສຶກຜິດ ວ່າຕົນເອງບໍ່ໄປຮ່ວມໃນຄຣິສຕະຈັກເມື່ອເວລາມີການປະຊຸມນະມັສການຂຶ້ນ, ແຕ່ໄດ້ເວົ້າເຣື່ອງໜູນໃຈ ໃຫ້ເອົາໃຈໃສ່ເພີ້ມໃນການໄປຮ່ວມຢ່າງສັດຊື່ເພື່ອຄວາມຮັກຂອງພວກເຮົາຈະຈະເຣີນໃຫຍ່ຂຶ້ນ ໃນເມື່ອພວກເຮົາໄດ້ໄປຮ່ວມນະມັສການຮ່ວມກັນເປັນປະຈຳ.

## ๓. <u>ຖືວ່າບາບນັ້ນໂຫດຮ້າຍ</u>: (ເຮັບເຣີ 10:26-29)

ຫລາຍປີມາແລ້ວມີຄົນເຂົ້າມາຢາມໃນຄຣິສຕະຈັກເວລາຂ້າພະເຈົ້າເປັນຫົວໜ້າຊາວໜຸ່ມ. ຄົນນັ້ນເຮັດໃຫ້ຂ້າພະເຈົ້າສົນໃຈເພາະລາວເອົາໃຈໃສ່ໃນການນະມັສການພຣະເຈົ້າ. ຕໍ່ມາຂ້າພະເຈົ້າຮູ້ນຳຫລັງວ່າລາວເປັນຫົວໜ້າຂາຍຢາ

ເສບຕິດ ລາວໃຊ້ຄຣິສຕະຈັກເປັນບ່ອນພົບກັບຄົນໜຸ່ມ. ລາວໄດ້ຍິນພຣະຄຳພຣະເຈົ້າ ແຕ່ເຫັນວ່າຊີວິດຂອງລາວບໍ່ມີການປ່ຽນແປງເກີດຂຶ້ນ.

ຜູ້ຂຽນປຶ້ມເຮັບເຣີເຕືອນວ່າ ພວກເຮົາບໍ່ສາມາດມີຄວາມໝັ້ນໃຈໃນພຣະເຈົ້າ **ຖ້າພວກເຮົາຕັ້ງໃຈເຮັດບາບ ຫລັງຈາກເຮົາໄດ້ຮັບເອົາຄວາມຈິງເລື່ອງຂອງພຣະເຈົ້າ.** ນີ້ເປັນຄຳເຕືອນທີ່ໜັກແໜ້ນໃນການເຮັດບາບໃນພຣະຄັມພີ. ຜູ້ຂຽນຍັງໄດ້ກ່າວວ່າ **ບໍ່ມີການຖວາຍເພື່ອຄວາມຜິດບາບຢ່າງນັ້ນ;** ແຕ່ພວກເຂົາ**ຕ້ອງປະເຊີນກັບການລົງໂທດໃນບຶງໄຟນາຣົກ.**

ຄຳເຕືອນນີ້ບອກວ່າ ຄຣິສະຕຽນທີ່ແທ້ຈິງຈະບໍ່ເຮັດຜິດບາບຈົນກາຍເປັນການຊິນເຄີຍຂອງຊີວິດປະຈຳວັນ. (ເບິ່ງ 1 ໂຢຮັນ 3:6). ຢ່າງໃດກໍຕາມ, ຄຳເຕືອນນີ້ອາດແມ່ນເວົ້າເຖິງ ຄວາມຜິດບາບອັນນຶ່ງ ຄືການປະຕິເສດບໍ່ຍອມຮັບວ່າພຣະເຢຊູຄຣິດເປັນອົງພຣະຜູ້ຊ່ວຍໃຫ້ລອດ. ໝາຍເຫດ ສິ່ງທີ່ເຮັດຫລັງຈາກການຮັບເອົາຄວາມຈິງ. ນັ້ນມີຄວາມໝາຍວ່າ ພວກເຂົາໄດ້ຍິນເລື່ອງຂ່າວປະເສີດແລ້ວແຕ່ປະຕິເສດ. ຜູ້ຂຽນບໍ່ໄດ້ເວົ້າວ່າ ຖ້າເຮັດຢ່າງນັ້ນບໍ່ມີໂອກາດປ່ຽນຈິດໃຈ ແລະຮັບເອົາການອະພັຍໂທດ; ແຕ່ໄດ້ເວົ້າວ່າ ບໍ່ມີການຖວາຍແນວອື່ນເຫລືອຢູ່. ເພາະພຣະຄຣິດສິ້ນພຣະຊົນຄັ້ງດຽວເປັນການສິ້ນສຸດ (ເຮັບເຣີ 10:10) ແລະບໍ່ຄວນເຮັດຊ້ຳອີກ (ຂໍ້ 18), ຖ້າປະຕິເສດໄມ້ກາງແຂນຂອງພຣະເຢຊູແລ້ວແມ່ນການປະຕິເສດຫົນທາງດຽວທີ່ນຳໄປເຖິງຄວາມລອດພົ້ນ. ການທີ່ປະຕິເສດສິ່ງທີ່ອົງພຣະວິນຍານໄດ້ເອີ້ນເອົານັ້ນເປັນຄວາມຜິດບາບທີ່ບໍ່ສາມາດໃຫ້ອະພັຍໄດ້. (ເບິ່ງ ມາຣະໂກ 3:29)

ຄຳເຕືອນນີ້ຜູ້ຂຽນໄດ້ແນໃສ່ຜູ້ອ່ານ ຫລືຄົນອື່ນບໍ່? ອາດຈະແມ່ນທັງສອງຄົນໃນເມື່ອຂຽນຈົດໝາຍນີ້ຂຶ້ນມາ. ຜູ້ຂຽນໄດ້ເວົ້າເຖິງຜູ້ອ່ານແລະຕົນເອງໃນປໂຍກທີ່ວ່າ, **ຖ້າພວກເຮົາ** ໃນຂໍ້ 25 ຜູ້ຂຽນໄດ້ເຕືອນບໍ່ໃຫ້ຂາດໄປຮ່ວມໃນຄຣິສຕະຈັກ. ໃນຂໍ້ 26 ຍັງໄດ້ເຕືອນວ່າຜູ້ທີ່ໄປຮ່ວມໃນຄຣິສຕະຈັກ ແຕ່ປະຕິເສດອົງພຣະຄຣິດບໍ່ສາມາດກ່າວວ່າຕົນເອງໝັ້ນໃຈຕໍ່ພຣະເຈົ້າໄດ້. ຜູ້ຂຽນບໍ່ໄດ້ເຕືອນຜູ້ທີ່ເຊື່ອວ່າພວກເຂົາສາມາດສູນເສັຽຄວາມພົ້ນ; ເພິ່ນໄດ້ເຕືອນຄົນທີ່ໄປຮ່ວມນະມັສການໃນພຣະວິຫານແຕ່ລະວັນ ແຕ່ບໍ່ໄດ້ຕັດສິນໃຈອັນເດັດຂາດຮັບເອົາອົງພຣະຄຣິດຢ່າງແທ້ຈິງ, ໝາຍຄວາມວ່າພວກເຂົາບໍ່ໄດ້ຮັບຄວາມພົ້ນແຕ່ເລີ້ມຕົ້ນພຸ້ນ.

ຄຳເຕືອນນີ້ກໍແນໃສ່ຜູ້ທີ່ບໍ່ເຊື່ອໃນທ້າມກາງພວກທີ່ເຊື່ອ. ເໝືອດັ່ງເຮົາໄດ້ເຫັນມາແລ້ວໃນບົດຮຽນອາທິດແລ້ວນີ້ ໃນບົດ 6:4-6, ຜູ້ຮັບຈົດໝາຍອາດເປັນກຸ່ມທີ່ນະມັສການພຣະເຈົ້າໃນໂຮງທັມສາລາຂອງພວກຢິວ, ບາງຄົນກໍເຊື່ອໃນພຣະຄຣິດ ແລະບາງຄົນກໍບໍ່ເຊື່ອ. ໃນບົດ 10:28-29, ຜູ້ຂຽນໄດ້ຍົກຄວາມປຽບທຽບລະຫວ່າງສາສນາຢິວ ແລະຄຣິສະຕຽນ ເພື່ອຈະສະແດງໃຫ້ເຫັນວ່າຫົນທາງຂອງອົງພຣະຄຣິດນັ້ນຍິ່ງໃຫຍ່ກວ່າ, ທ່ານຍັງກ່າວວ່າ ຖ້າປະຕິເສດ **ກົດຂອງໂມເຊຕ້ອງມີໂທດຖືກຕາຍໂດຍທີ່ບໍ່ມີຄວາມປານີ, ແຕ່ຕໍ່ໄປນີ້ຍິ່ງຮ້າຍແຮງກວ່າຫລາຍເທົ່າໃດ** ສຳລັບຜູ້ທີ່ປະຕິເສດອົງພຣະຄຣິດ.

ຜູ້ຂຽນໄດ້ເວົ້າເຖິງຄົນທີ່ປະຕິເສດພຣະຢຊູຢ່າງແຈ່ມແຈ້ງ. ນຶ່ງ, ພວກເຂົາໄດ້**ຢຽບພຣະບຸດຂອງພຣະເຈົ້າລົງ.** ເປັນເໝືອນພວກເຮົາໄດ້ເຕະທຳພຣະກາຍຂອງພຣະອົງ. ສອງ, ພວກເຂົາໄດ້**ປມາດພຣະໂລຫິດແຫ່ງພຣະສັນຍາ.** ຄຳເວົ້າວ່າປມາດແມ່ນເວົ້າເຖິງສິ່ງທີ່ບໍ່ສະອາດເວລາຖວາຍບູຊາໃນທຳນຽມຂອງພວກຢິວ. ພວກເຂົາບໍ່ເຫັນສົມຄວນວ່າ ພຣະໂລຫິດຂອງພຣະຄຣິດທີ່ໄດ້ໄຫລລົງໃນໄມ້ກາງແຂນນັ້ນເປັນເຄື່ອງບູຊາສຳລັບຄວາມບາບຂອງພວກເຂົາ. ສາມ, **ພວກເຂົາໄດ້ປມາດວິນຍານແຫ່ງພຣະຄຸນ.** ໃນປຶ້ມ ມາລາໂກ 3:29 ກ່າວວ່າ, ໃຜກໍຕາມທີ່ປມາດອົງພຣະວິນຍານບໍຣິສຸດເຈົ້າຈະບໍ່ໄດ້ຮັບອະພັຍໃຫ້ຈັກເທື່ອ ແຕ່ລາວຈະມີໂທດຕລອດໄປ.

**4. <u>ຈື່ຈຳຊັຍຊະນະທີ່ຜ່ານມາ</u>:** (ເຮັບເຣີ 10:32-36)

ຫລັງຈາກເຕືອນຜູ້ອ່ານແລ້ວ ຜູ້ຂຽນກໍຍັງໄດ້ໜູນໃຈພວກເຂົາເໝືອນກັນ. ເພິ່ນໄດ້ຮ້ອງຂໍໃຫ້**ພວກເຂົາຈຳເວລາແຕ່ທີ່ວທີຕອນເຂົາໄດ້ເຊື່ອໃໝ່** ພວກເຂົາໄດ້ຮັບການ**ຂົ່ມເຫັງຢ່າງຮ້າຍແຮງ.** ພວກເຂົາເຄີຍມີຊັຍຊະນະມາແລ້ວແລະກໍຈະໄດ້ຮັບຊັຍຊະນະອີກໃນປັດຈຸບັນແລະອະນາຄົດ.

ເວລາແລະສະຖານທີ່ ເວລາພວກເຂົາໄດ້ຖືກຂົ່ມເຫັງນັ້ນບໍ່ຮູ້ຈັກດີວ່າເປັນເວລາໃດແລະຢູ່ໃສແທ້. ແນວໃດກໍຕາມ ເຫັນວ່າພວກເຂົາໄດ້ຮັບຄວາມທໍຣະມານຢ່າງເຈັບປວດ. **ພວກເຂົາຖືກປະຈານຂາຍໜ້າໃນຊຸມໝຸມຊົນ**, ພວກ **ເຂົາເຫັນໃຈ**ເພື່ອນຜູ້ທີ່ເຊື່ອທີ່ໄດ້ຖືກຈຳຄຸກເພາະຂ່າວປະເສີດ, ພວກເຂົາຍັງມີຄວາມຍິນດີໃນເມື່ອສິ່ງຂອງຖືກຍຶດເອົາໄປຈາກຣັຖບານ ເພາະພວກເຂົາຮູ້ແລ້ວວ່າ ເຂົາຈະໄດ້ຮັບ**ສິ່ງທີ່ດີກວ່ານັ້ນ** ລໍຖ້າໃນແຜ່ນດິນສວັນ.

ຜູ້ຂຽນເຊື່ອວ່າພວກເຂົາບໍ່ໄດ້ເສັຽ**ຄວາມໝັ້ນໃຈ**ໃນພຣະເຈົ້າ, ແຕ່ເພິ່ນໄດ້ເຕືອນພວກເຂົາໃຫ້ເອົາສິ່ງທີ່ໄດ້ຍິນໄດ້ຟັງນັ້ນບໍ່ໃຫ້**ຖິ້ມເສັຽໄປ**. ພວກເຂົາຄວນຈຳການຂົ່ມເຫັງທີ່ເຂົາໄດ້ຮັບທີ່ຜ່ານໄປນັ້ນ. ຄ້າຍໆຄືນັກກິລາ ໂອລິມປິກ ທີ່ລໍຖ້າຂຶ້ນເວທີຮັບເອົາລາງວັນ. ພວກເຂົາຄວນຮຽກຮ້ອງເອົາ**ລາງວັນອັນຍິ່ງໃຫຍ່**ຊຶ່ງເປັນຂອງພວກເຂົາ.

ເຮັດແນວໃດພວກເຮົາຈຶ່ງຮັກສາຄວາມໝັ້ນໃຈໄວ້ໄດ້? ພວກເຮົາຕ້ອງການຄວາມອົດທົນ, ຄຳນີ້ໝາຍຄວາມວ່າໃຫ້ອົດທົນດົນນານຢູ່ໃນສະພາບລຳບາກ ໃນເວລາປະເຊີນກັບຄວາມລຳບາກຕ່າງໆໃນຊີວິດ. ພວກເຮົາສາມາດເຮັດໄດ້ໂດຍ**ນ້ຳພຣະທັຍຂອງພຣະເຈົ້າ** ແລະຮັກສາ**ຄວາມໝັ້ນໃຈ**ໄວ້.

## ບົດຮຽນໃນຊີວິດ

ໄມ້ກາງແຂນຂອງພຣະເຢຊູໄດ້ເຮັດໃຫ້ພວກເຮົາມີຄວາມກ້າຫານທີ່ຈະເຂົ້າໄປຫາພຣະເຈົ້າ ແລະເຊື່ອຟັງໃນພຣະອົງຢ່າງບໍ່ສົງສັຍ. ພວກເຮົາຄວນຢູ່ໃນວິຫານຂອງພຣະເຈົ້າ ແລະຖືວ່າບາບໂຫດຮ້າຍ. ພວກເຮົາບໍ່ສາມາດມີຄວາມໝັ້ນໃຈໃນພຣະເຈົ້າໃນເມື່ອບາບຍັງປົກຄອງຊີວິດຂອງພວກເຮົາຢູ່. ຄວາມສັດຊື່ຂອງເຮົາໃນພຣະເຈົ້າຄວນເປັນສິ່ງດຶງດູດໃຫ້ເຮົາມີຄວາມອົດທົນໃນປັດຈຸບັນນີ້.

ມັນມີຄວາມໝາຍຢ່າງໃດຂອງຜູ້ມີຄວາມເຊື່ອ ໃຫ້ມີຄວາມໝັ້ນໃຈຕໍ່ພຣະເຈົ້າ?

- ໝາຍຄວາມວ່າ ພວກເຮົາບໍ່ຕ້ອງຢ້ານວ່າຈະເສັຽຄວາມພົ້ນ ເພາະວ່າຄວາມພົ້ນນັ້ນໄດ້ມາກໍເພາະສິ່ງທີ່ອົງພຣະເຢຊູໄດ້ເຮັດສຳເຣັດແລ້ວເທິງໄມ້ກາງແຂນ, ພວກເຮົາບໍ່ຄວນຢ້ານເສັຽມັນໄປ.
- ໝາຍຄວາມວ່າພວກເຮົາຮູ້ຄຸນຄ່າພຣະຄຸນຂອງພຣະເຈົ້າ. ຄວາມກ້າຫານຂອງເຮົາບໍ່ແມ່ນການທະນົງໂຕຂຶ້ນ, ແຕ່ມັນແມ່ນການຖ່ອມຕົວດ້ວຍຄວາມໝັ້ນໃຈວ່າການຖວາຍຂອງອົງພຣະເຢຊູນັ້ນເປັນສິ່ງພຽງພໍຕໍ່ຄວາມຜິດຄວາມບາບຂອງພວກເຮົາ.
- ໝາຍຄວາມວ່າພວກເຮົາຄວນເຂົ້າໄປໃກ້ພຣະເຈົ້າ ແລະເປັນຜູ້ເອົາໃຈໃສ່ປະຕິບັດຮັບໃຊ້ໃນຄຣິສຕະຈັກ.
- ໝາຍຄວາມວ່າພວກເຮົາສາມາດອົດທົນຕໍ່ຄວາມລຳບາກໄດ້ ເພາະພວກເຮົາເຄີຍເຫັນພຣະເຈົ້າກະທຳການຜ່ານໄປໃນອະດີດ.
- ບໍ່ໄດ້ໝາຍຄວາມວ່າ ພວກເຮົາຫລິ້ນເກມກັບພຣະເຈົ້າ ແລະຕົວະຕໍ່ພຣະອົງ ໃນເມື່ອພວກເຮົາຕັ້ງໃຈເຮັດບາບ ແລະປະຕິເສດພຣະຄຣິດ, ທີ່ສຸດພວກເຮົາກໍບໍ່ມີຄວາມໝັ້ນໃຈໃນພຣະເຈົ້າໄດ້.

ນັກສາສນາສາດຄົນນຶ່ງຊື່ວ່າ ມາຕິນລູເຕີ ເປັນນັກປະຕິຮູບ ໄດ້ຕອກຄຳຂວັນ 95 ຂໍ້ໃສ່ປະຕູທໍຕຶກໃຫຍ່ທີ່ໃຊ້ເປັນໂບດໃນເມືອງ ວິດເຕັນເບີ ປະເທດເຢັຽຣະມັນ ເພາະສັນຕະປາປາໃຊ້ສິດທິຜິດ (ໃຫ້ອະພັບຄວາມບາບຂອງຄົນລ່ວງໜ້າກ່ອນພວກເຮົາໄດ້ເຮັດຜິດບາບ). ການທີ່ທ່ານ ມາຕິນລູເຕີ ມີຄວາມກ້າຫານເຮັດດັ່ງນັ້ນໄດ້ກໍເພາະເພິ່ນເຂົ້າໃຈດີເຖິງການຖວາຍທີ່ອົງພຣະເຢຊູໄດ້ກະທຳ. ຂໍໃຫ້ພວກເຮົາມີຄວາມໝັ້ນໃຈເໝືອນກັນໃນເວລານະມັສການ ແລະເປັນພະຍານຕໍ່ຄົນອື່ນ.